ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ພິທີປາຖະກະຖາ ວັນສ້າງຕັ້ງອົງການຈັດຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 67 ປີ




ໃນຕອນເຊົ້າຂອງວັນທີ 23 ກໍລະກົດ 2022 ທີ່ ສະໂມສອນສະຖາບັນທະນາຄານ, ນະຄອນຫຼວງວຽງຈັນ. ສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ (ສມຍ.ທຫລ) ໄດ້ຈັດຕັ້ງພິທີປາຖະກະຖາ ເນື່ອງໃນໂອກາດວັນສ້າງຕັ້ງອົງການຈັດຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 67 ປີ ຂຶ້ນ ໂດຍການໃຫ້ກຽດເປັນປະທານຂອງທ່ານ ປອ. ບຸນເຫຼືອ ສິນໄຊວໍລະວົງ ຜູ້ວ່າການ ທຫລ ແລະ ທ່ານ ນາງ ສີຣິກິດ ບຸບຜາ ຮອງປະທານສູນກາງສະຫະພັນແມ່ຍິງລາວ ພ້ອມດ້ວຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ, ທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ ກຳມະການປະຈຳພັກ ທຫລ, ທ່ານ ນາງ ສາຍສະໝອນ ຈັນທະຈັກ ປະທານສະຫະພັນແມ່ຍິງ ທຫລ, ບັນດາຄະນະສະຫະພັນແມ່ຍິງ ທຫລ, ຄະນະສະຫະພັນແມ່ຍິງຮາກຖານ, ຜູ້ຕາງໜ້າຂອງສາມອົງການຈັດຕັ້ງມະຫາຊົນ ແລະ ສະມາຊິກແມ່ຍິງຂອງຂະແໜງການທະນາຄານເຂົ້າຮ່ວມ 400 ກວ່າຄົນ.

ພາຍໃນພິທີທ່ານ ນາງ ໄກສອນ ໄຊຍະພອນ ຮອງປະທານສະຫະພັນແມ່ຍິງ ທຫລ ໄດ້ຂຶ້ນລາຍງານຫຍໍ້ກ່ຽວກັບການສະຫຼຸບຕີລາຄາວຽກງານແມ່ຍິງໃນຂະແໜງການທະນາຄານ ໃນໄລຍະຜ່ານມາ ໂດຍໄດ້ຍົກໃຫ້ເຫັນຜົນງານພົ້ນເດັ່ນຫຼາຍດ້ານຂອງສະມາຊິກແມ່ຍິງໃນຂະແໜງການທະນາຄານທີ່ສາມາດຍາດມາໄດ້. ຫຼັງຈາກນັ້ນ, ທ່ານ ນາງ ສີຣິກິດ ບຸບຜາ ຮອງປະທານສູນກາງສະຫະພັນແມ່ຍິງ ໄດ້ໃຫ້ກຽດບັນຍາຍກ່ຽວກັບປະຫວັດຄວາມເປັນມາ ແລະ ຄວາມໝາຍຄວາມສຳຄັນຂອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ໂດຍໄດ້ຍົກໃຫ້ເຫັນການເສຍສະຫຼະອັນສູງສົ່ງຂອງ

ເອື້ອຍນ້ອງແມ່ຍິງໃນພາລະກິດຕໍ່ສູ້ກູ້ຊາດຄຽງບ່າຄຽງໄຫຼ່ກັບເພດຊາຍໃນອາດີດ ຈົນມາເຖິງໃນຍຸກປັດຈຸບັນກໍ່ຍັງໄດ້ສືບຕໍ່ປະຕິບັດໜ້າທີ່ວຽກງານຂອງຕົນທຽບເທົ່າກັບເພດຊາຍ. ແລະ ໃນໂອກາດອັນສະຫງ່າລາສີນີ້ ທ່ານຜູ້ອຳນວຍການ ທຫລ ຍັງໄດ້ໃຫ້ກຽດໂອ້ລົມໃນພິທີ, ໂດຍທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານຂອງເອື້ອຍນ້ອງສະມາຊິກແມ່ຍິງຂອງຂະແໜງການທະນາຄານທີ່ຍາດມາໄດ້, ສະແດງອອກຄື ຕັ້ງແຕ່ອາດີດຈົນເຖິງປັດຈຸບັນ ໄດ້ມີພະນັກງານຫຼັກແຫຼ່ງນຳພາທີ່ເປັນເພດຍິງກວມເອົາເປັນສ່ວນຫຼາຍ, ສະມາຊິກແມ່ຍິງໄດ້ຕັ້ງໜ້າບຸກບືນເຮັດຫຼ້ອນໜ້າທີ່ຂອງຕົນທີ່ໄດ້ຮັບມອບໝາຍຈົນໄດ້ຮັບຜົນສຳເລັດໃນຫຼາຍດ້ານ ທຽບເທົ່າກັບເພດຊາຍ.




ພາຍຫຼັງສຳເລັດພິທີ, ຄະນະປະທານ ແລະ ແຂກຜູ້ເຂົ້າຮ່ວມ ໄດ້ຢ້ຽມຊົມການວາງສະແດງສິນຄ້າຂອງສະມາຊິກແມ່ຍິງຈາກບັນດາສະຫະພັນແມ່ຍິງຮາກຖານຕ່າງໆຂອງຂະແໜງທະນາຄານ ໂດຍມີຫຼາຍຜະລິດຕະພັນທີ່ໜ້າສົນໃຈ ແລະ ເປັນຜົນຜະລິດຈາກຝີມືແຮງງານຂອງເອື້ອຍນ້ອງແມ່ຍິງ ແລະ ຄອບຄົວ.





# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ

# ເສດຖະກິດຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງກັນນຳໃຊ້ເງິນກີບ